ສະບັບວັນທີ 14.01.2020

# ເອກະສານຊ້ອນທ້າຍ1:
# ບົດປະເມີນຜົນກະທົບຂອງຮ່າງນິຕິກຳ

<u>ໄລຍະຂອງບົດປະເມີນຜົນກະທົບຂອງຮ່າງນິຕິກຳ</u>

ຂັ້ນເລີ່ມຕົ້ນ ☐ ວັນສົ່ງໃຫ້ກະຊວງຍຸຕິທຳ/ພະແນກຍຸຕິທຳ ເພື່ອກວດກາ ແລະໃຫ້ຄຳແນະນຳ....................

ຂັ້ນທາບທາມຄຳເຫັນ ☐ ວັນປັບປຸງຄືນເພື່ອນຳໄປທາບທາມຄຳເຫັນໃນໄລຍະ 60 ວັນ....................

ຂັ້ນສຸດທ້າຍ ☐ ວັນສົ່ງໃຫ້ກະຊວງຍຸຕິທຳ/ພະແນກຍຸຕິທຳ ເພື່ອໃຫ້ຄຳເຫັນ

ຂັ້ນສຸດທ້າຍ ☐ ວັນສຳເລັດການປັບປຸງ ເພື່ອພິມເຜີຍແຜ່.....................................

## 1. ຂໍ້ມູນຕິດຕໍ່ພົວພັນ

- ຊື່ ກະຊວງ/ອົງການ: ກະຊວງອຸດສາຫະກຳ ແລະ ການຄ້າ
- ທີ່ຕັ້ງ ຂອງກະຊວງ/ອົງການ: ກົມນະໂຍບາຍການຄ້າຕ່າງປະເທດ
- ເບີໂທ ແລະ ອີເມວ: 021 450066; sinthavanh95@gmail.com
- ພະນັກງານຮັບຜິດຊອບ: ທ ສິນທະວັນ ຈັນທະວົງ, ວິຊາການ, ກົມນະໂຍບາຍການຄ້າຕ່າງປະເທດ

## 2. ຂໍ້ມູນສະຫຼຸບ

**2.1 ລາຍລະອຽດຂອງຮ່າງນິຕິກຳ**

- **ຊື່ນິຕິກຳ:** ດຳລັດວ່າດ້ວຍການຄ້າທາງເອເລັກໂຕຣນິກ [Decree on Electronic Commerce]
- **ປະເພດນິຕິກຳ: ດຳລັດ ☑ສ້າງໃໝ່ ☐ ປັບປຸງ**
- **ກຳນົດເວລາໃນການສ້າງນິຕິກຳໃຫ້ສຳເລັດ (ນັບແຕ່ວັນສ້າງ ແລະ ປັບປຸງ, ວັນທາບທາມຄຳເຫັນ, ວັນຕົກລົງເຫັນດີ, ວັນສົ່ງໃຫ້ ກະຊວງຍຸຕິທຳ/ພະແນກຍຸຕິທຳ, ລັດຖະບານ):**

1. ສຳເລັດບົດສະເໜີສ້າງດຳລັດ ພ້ອມດ້ວຍແຜນສ້າງກົດໝາຍ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ແລະ ສົ່ງໃຫ້ຫ້ອງການສຳນັກງານນາຍົກລັດຖະມົນຕີ ໃນເດືອນ ທັນວາ 2018 ໃຫ້ສາມາດເຂົ້າໃນວາລະເດືອນທັນວາ 2019.
2. ສຳເລັດສ້າງຕັ້ງຄະນະຄົ້ນຄວ້າຮ່າງດຳລັດວ່າດ້ວຍການຄ້າທາງເອເລັກໂຕຣນິກ (ເດືອນມັງກອນ 2019).
3. ຈັດກອງປະຊຸມພາຍໃນຄະນະຮັບຜິດຊອບຮ່າງດຳລັດ ຄັ້ງທີ I ເພື່ອປຶກສາຫາລືກ່ຽວກັບ ໂຄງສ້າງ ແລະ ເນື້ອໃນຂອງກົດໝາຍ (ເດືອນກຸມພາ 2019).
4. ຈັດກອງປະຊຸມພາຍໃນຄະນະຮັບຜິດຊອບຮ່າງດຳລັດ ຄັ້ງທີ II ໂດຍສົມທົບກັບຊ່ຽວຊານຕ່າງປະເທດ ເພື່ອຜ່ານຮ່າງສະບັບທີ 1 ໃນເດືອນ ພຶດສະພາ 2019.
5. ຈັດກອງປະຊຸມພາຍໃນຄະນະຮັບຜິດຊອບຮ່າງດຳລັດ ຄັ້ງທີ III ເພື່ອຜ່ານຮ່າງສະບັບທີ 2 ໃນເດືອນ ກໍລະກົດ 2019.
6. ຈັດກອງປະຊຸມເປີດກ້ວາງເພື່ອຮັບຟັງຄະນະວິຊາການ ເຫັນຈາກພາກລັດ ແລະ ທຸລະກິດ ທົ່ວປະເທດ (ຕຸລາ-ພະຈິກ 2019).
7. ສຳເລັດຮ່າງດຳລັດສະບັບທີ 3 (ສະບັບສຸດທ້າຍ) (ເດືອນທັນວາ 2019).
8. ຈັດກອງປະຊຸມປຶກສາຫາລື ກັບ ກົມກົດໝາຍ, ກະຊວງຍຸຕິທຳ ເພື່ອຜ່ານເນື້ອໃນກ່ອນເຂົ້າກອງປະຊຸມລັດຖະບານ (ເດືອນກຸມພາ 2020).
9. ສົ່ງຮ່າງກົດໝາຍເຂົ້າວາລະກອງປະຊຸມລັດຖະບານ (ເດືອນມີນາ 2020).

**2.2 ນິຕິກຳທີ່ກ່ຽວຂ້ອງ:**

- ກົດໝາຍ ວ່າດ້ວຍ ການປົກປ້ອງຜູ້ຊົມໃຊ້ ສະບັບເລກທີ 02/ສພຊ, ສະບັບເລກທີ 30 ມິຖຸນາ 2010;
- ກົດໝາຍ ວ່າດ້ວຍ ການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ ເລກທີ 61/ສພຊ, ລົງວັນທີ 15 ກໍລະກົດ 2015;
- ກົດໝາຍ ວ່າດ້ວຍ ການແຂ່ງຂັນທາງທຸລະກິດ, ສະບັບເລກທີ 60 /ສພຊ, ລົງວັນທີ 14 ກໍລະກົດ 2015;
- ກົດໝາຍ ວ່າດ້ວຍ ລາຍເຊັນເອເລັກໂຕຣນິກ ເລກທີ 59/ສພຊ, ລົງວັນທີ 12 ທັນວາ 2018;
- ກົດໝາຍ ວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ ເລກທີ 25/ສພຊ, ລົງວັນທີ 12 ພຶດສະພາ 2017;
- ກົດໝາຍ ວ່າດ້ວຍ ທຸລະກຳທາງ ເອເລັກໂຕຣນິກ ເລກທີ 20/ສພຊ, ລົງວັນທີ 07 ທັນວາ 2012;
- ກົດໝາຍ ວ່າດ້ວຍ ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ເລກທີ 02/ສພຊ, ລົງວັນທີ 07 ພະຈິກ 2016;
- ກົດໝາຍ ວ່າດ້ວຍ ຊັບສິນທາງປັນຍາ (ສະບັບປັບປຸງ) ເລກທີ 38/ສພຊ, ລົງວັນທີ 15 ພະຈິກ 2017;
- ສັນຍາວ່າດ້ວຍ ການຄ້າທາງເອເລັກໂຕນິກຂອງອາຊຽນ, ລົງວັນທີ 04 ມີນາ 2019;
- ກົດໝາຍວ່າດ້ວຍ ວິສາຫະກິດ (ສະບັບປັບປຸງ) ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ກົດໝາຍວ່າດ້ວຍ ສ່ວຍສາອາກອນ (ສະບັບປັບປຸງ) ເລກທີ 70/ສພຊ, ລົງວັນທີ 15 ທັນວາ 2015.

**ຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງນັ້ນ ມີຄວາມສອດຄ່ອງກັບນິຕິກຳທີ່ກ່ຽວຂ້ອງ ຫຼືບໍ່?**

☑ ສອດຄ່ອງ ☐ ບໍ່ສອດຄ່ອງ

**2.3 ຜົນກະທົບຂອງນິຕິກຳ ຕໍ່ທຸລະກິດ** ☐ໜ້ອຍ ☑ຫຼາຍ ☐ ບໍ່ມີ

ນິຕິກຳ ຈະສົ່ງຜົນກະທົບທີ່ສຳຄັນ ແລະ ເອື້ອອຳນວຍຕໍ່ການຂະຫຍາຍຕົວຂອງການຄ້າທາງເອເລັກໂຕຣນິກ ໃນສປປ ລາວ. ນິຕິກຳສະບັບນີ້ ຈະສົ່ງເສີມໃຫ້ທຸລະກິດການຄ້າທາງເອເລັກໂຕຣນິກ ເຂົ້າສູ່ລະບົບ ໂດຍມີຖານະທາງດ້ານກົດໝາຍທີ່ຊັດເຈນ ຮັບປະກັນໄດ້ການປົກປ້ອງຜົນປະໂຫຍດອັນຊອບທຳຂອງຜູ້ຊົມໃຊ້ສິນຄ້າ ແລະ ການບໍລິການ [ລາຍລະອຽດຢູ່ໃນບົດລາຍງານຮ່າງດຳລັດ]

**2.4 ຜົນກະທົບຂອງນິຕິກຳຕໍ່ງົບປະມານແຫ່ງລັດ** ☑ໜ້ອຍ ☐ ຫຼາຍ ☐ ບໍ່ມີ

ຮຽກຮ້ອງໃຫ້ມີການນຳໃຊ້ງົບປະມານຂອງລັດເພີ່ມເຕີມ ພຽງແຕ່ໃນຂອດຈັດຕັ້ງປະຕິບັດດຳລັດວ່າດ້ວຍການຄ້າທາງເອເລັກໂຕຣນິກ, ໂດຍສະເພາະແມ່ນຂະບວນການພັດທະນາກົນໄກຄຸ້ມຄອງຂອງລັດໃນຂະແໜງການນີ້ ແລະ ການຄຸ້ມຄອງທຸລະກິດການຄ້າທາງເອເລັກໂຕຣນິກ ແຕ່ວ່າ ຜົນກະທົບຕໍ່ງົບປະມານຈະມີໜ້ອຍ ຍ້ອນວ່າ ການຈັດຕັ້ງປະຕິບັດ ສາມາດດຳເນີນໂດຍອີງການຈັດຕັ້ງທີ່ມີຢູ່ແລ້ວເປັນຕົ້ນຕໍ ຕົວຢ່າງ: ກົມການຄ້າພາຍໃນ, ກົມສົ່ງເສີມການຄ້າ, ກົມນະໂຍບາຍການຄ້າຕ່າງປະເທດ, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການອື່ນໆ.

### 3. ການອະທິບາຍຫຍໍ້ກ່ຽວກັບຮ່າງນິຕິກຳ

**3.1 ເປົ້າໝາຍ:**
(ຂໍ້ແນະນຳ-ອະທິບາຍລາຍລະອຽດກ່ຽວກັບບັນຫາ, ລະດັບຄວາມສຳຄັນ ແລະ ຄວາມສ່ຽງທີ່ຈະເກີດ ຈາກບັນຫາ ແລະ ຫຼັກຖານທີ່ເຮັດໃຫ້ບັນຫາ ແລະ ຄວາມສ່ຽງນັ້ນເກີດຂຶ້ນ)

ເປົ້າໝາຍຂອງດຳລັດສະບັບນີ້ແມ່ນເພື່ອກສົ່ງເສີມວຽກງານການຄ້າທາງເອເລັກໂຕຣນິກ, ທຸລະກິດການຄ້າທາງເອເລັກໂຕຣນິກ ແລະ ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ຊົມໃຊ້ການຄ້າທາງເອເລັກໂຕຣນິກ ພ້ອມທັງເປັນການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ເຂົ້າເຖິງຕະຫຼາດທີ່ໃຫຍ່ຂຶ້ນຜ່ານຊ່ອງທາງເອເລັກໂຕຣນິກ ເພື່ອປະກອບສ່ວນເຂົ້າໃນການຫັນເປັນທັນສະໄໝຂອງຂະແໜງອຸດສາຫະກຳ ແລະ ການຄ້າ ກໍຄືຂອງຊາດ.

**3.2 ຈຸດປະສົງ**
(ຂໍ້ແນະນຳ - ເວົ້າເຖິງນະໂຍບາຍຂອງນິຕິກຳ ລວມທັງ ສາຍພົວພັນ ລະຫວ່າງ ນະໂຍບາຍດັ່ງກ່າວ ກັບນະໂຍບາຍລວມ ຂອງລັດຖະບານ;)

ຈຸດປະສົງຂອງດຳລັດ ແມ່ນເພື່ອ (1) ກຳນົດວຽກງານການຄ້າທາງເອເລັກໂຕຣນິກ ແລະ ອົງການຄຸ້ມຄອງ (2) ຄຸ້ມຄອງທຸລະກິດການຄ້າທາງເອເລັກໂຕຣນິກ ແລະ ປົກປ້ອງຜູ້ຊົມໃຊ້, (3) ປະຕິບັດພັນທະຕາມສັນຍາການຄ້າທາງເອເລັກໂຕຣນິກອາຊຽນ [ASEAN Agreement on E-Commerce] (ລາຍລະອຽດຢູ່ໃນບົດສະເໜີ).

**3.3 ຮ່າງນິຕິກຳທີ່ສະເໜີສ້າງ**
(ຂໍ້ແນະນຳ-ບອກລາຍລະອຽດກ່ຽວກັບລັກສະນະຂອງຮ່າງນິຕິກຳ ແລະອະທິບາຍເປັນຫຍັງຈຶ່ງເລືອກ ຮ່າງນິຕິກຳນີ້ ຖ້າທຽບໃສ່ທາງເລືອກອື່ນເຊັ່ນ ຜົນປະໂຫຍດສູງສຸດທີ່ໄດ້ຮັບ, ຄວາມສອດຄ່ອງກັບ ສະພາບຕົວຈິງຂອງລາວ ແລະ ບັນຫາອື່ນ)

**<u>ເງື່ອນໄຂພື້ນຖານ</u>**
(ໃນບົດສະເໜີ)

**<u>ເຫດຜົນສຳລັບການເລືອກນຳໃຊ້ມາດຕະການນີ້</u>**
(ໃນບົດສະເໜີ)

### 4. ຜົນກະທົບທີ່ຄາດຄະເນ

**4.1 ຄາດຄະເນຜົນກະທົບຕໍ່ ສປປ ລາວ ແລະ ສັງຄົມ**
*(ຂໍ້ແນະນຳ-ພິຈາລະນາຜົນກະທົບທັງໝົດທີ່ອາດເກີດຂຶ້ນຈາກນິຕິກຳທີ່ສະເໜີສ້າງເຊັ່ນ ຕໍ່ເສດຖະກິດ, ສິ່ງແວດລ້ອມ, ການຈ້າງງານ, ສຸຂະພາບ, ຄວາມປອດໄພ ແລະ ຂະໜາດ /ລະດັບ ຂອງແຕ່ລະຜົນກະທົບ)*

ຜົນກະທົບໂດຍລວມຂອງດຳລັດວ່າດ້ວຍການຄ້າທາງເອເລັກໂຕຣນິກ ຈະເປັນປະໂຫຍດໂດຍລວມແກ່ຜູ້ຊົມໃຊ້ສິນຄ້າ ຫຼື ການບໍລິການ ທາງເອເລັກໂຕຣນິກ ເນື່ອງຈາກໄດ້ກຳນົດມາດຕະການຄຸ້ມຄອງທີ່ແທດເໝາະກາທຸລະກິດການຄ້າທາງເອເລັກໂຕຣນິກ ເປັນຕົ້ນແມ່ນຜູ້ປະກອບການຕ້ອງມີຄວາມຮັບຜິດຊອບທາງກົດໝາຍທີ່ຊັດເຈນ ຕໍ່ກັບສິນຄ້າ ແລະ ການບໍລິການທີ່ຕົນນຳມາຈຳໜ່າຍ ຊຶ່ງກໍເປັນການປົກປົກປ້ອງສິດ ແລະ ຜົນປະໂຫຍດອັນ

| |
|---|
| ຊອບທຳຂອງຜູ້ຊົມໃຊ້. ນອກຈາກນັ້ນແລ້ວ, ການເປີດໃຫ້ຂະແໜງທຸລະກິດໃໝ່ເປັນຕົ້ນແມ່ນຜູ້ຄ້າຂາຍອອນລາຍນອກລະບົບ ສາມາດມີຖານະທາງກົດໝາຍທີ່ຖືກຕ້ອງ ກໍຈະເປັນການເພີ່ມອີກຊ່ອງທາງ ທີ່ປອດໄພ ແກ່ຜູ້ຊົມໃຊ້ສິນຄ້າ ແລະ ການບໍລິການ. |
| **4.2 ຄາດຄະເນຜົນກະທົບຕໍ່ທຸລະກິດ**<br>*(ພິຈາລະນາຜົນກະທົບທັງໝົດທີ່ອາດເກີດຂຶ້ນຈາກນິຕິກຳທີ່ສະເໜີສ້າງ ຕໍ່ປະເພດ, ກຸ່ມ ແລະຂະໜາດຂອງທຸລະກິດ ລວມທັງ ຂະໜາດ/ລະດັບຂອງແຕ່ລະຜົນກະທົບ)*<br><br>ດຳລັດສະບັບນີ້ກຳນົດມາດຕະການຄຸ້ມຄອງທຸລະກິດການຄ້າທາງເອເລັກໂຕຣນິກ ຊຶ່ງໃນດ້ານດີ ກໍແມ່ນເປັນການຮັບຮູ້ສະຖານະພາບທາງກົດໝາຍຂອງຜູ້ປະກອບການອອນລາຍຕ່າງໆ ໃຫ້ເຂົ້າມາຢູ່ໃນລະບົບຄຸ້ມຄອງວິສາຫະກິດ ຊຶ່ງເຮັດໃຫ້ເຂົາເຈົ້າດຳເນີນທຸລະກິດໃນລະບົບໄດ້ຢ່າງເຕັມທີ່. ນອກຈາກນັ້ນແລ້ວ, ທຸລະກິດຈະສາມາດເຫັນພາບລວມທີ່ຊັດເຈນ (ເຊັ່ນ: ຕ້ອງພົວພັນກັບພາກສ່ວນໃດແດ່, ຕ້ອງປະຕິບັດຕາມເງື່ອນໄຂ ແລະ ຂັ້ນຕອນໃດແດ່ ສຳລັບການຂໍອະນຸຍາດສ້າງຕັ້ງ ແລະ ດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກແຕ່ລະປະເພດ; ສິດ, ພັນທະ/ໜ້າທີ່ ແລະ ຂໍ້ຫ້າມ ຂອງຜູ້ດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ມີຫຍັງແດ່)<br><br>ອີກໃນດ້ານໜຶ່ງ, ການປະຕິບັດຕາມມາດຕະການຄຸ້ມຄອງໃນດຳລັດ, ທຸລະກິດການຄ້າທາງເອເລັກໂຕຣນິກມີພັນທະຕ້ອງໄດ້ປະຕິບັດຕາມຂັ້ນຕອນຕາມລະບຽບການ ແລະ ກົດໝາຍ ຊຶ່ງອາດຈະເກີດຄ່າສິ້ນເປືອງທີ່ຈຳເປັນບາງຢ່າງ ຊຶ່ງຖືວ່າບໍ່ສູງ ຖ້າທຽບໃສ່ການໄດ້ມາຊຶ່ງຖານະທາງກົດໝາຍໃນການດຳເນີນທຸລະກິດ. |
| **4.3 ຄາດຄະເນຜົນກະທົບຕໍ່ລັດຖະບານ**<br>***(ຂໍ້ແນະນຳ-ກຳນົດລາຍລະອຽດທີ່ລັດຖະບານ ຈະຕ້ອງເຮັດ ເພື່ອບໍລິຫານຈັດການ ແລະຈັດຕັ້ງ** ປະຕິບັດນິຕິກຳ ທີ່ສະ ເໜີສ້າງ ລວມທັງ ຄ່າສິ້ນເປືອງທັງໝົດ ທີ່ຄາດວ່າຈະເກີດຂຶ້ນໃນເບື້ອງຕົ້ນ ແລະໃນແຕ່ລະປີ. ຕົວຢ່າງ: ຄ່າສິ້ນເປືອງກ່ຽວ ກັບຄ່າບໍລິຫານ ລວມທັງຄ່າສິ້ນເປືອງໃນການ ຈັດຕັ້ງປະຕິບັດນິຕິກຳ, ຄ່າສິ້ນເປືອງໃນການອະນຸມັດ, ຂໍອະນຸຍາດຕ່າງໆ, ການຈັດຝຶກອົບຮົມ, ການເກັບກຳບັນທຶກຕ່າງໆ ຫຼື ການແຈ້ງ ຫຼື ເຜີຍແຜ່ຕໍ່ສັງຄົມ/ທຸລະກິດ.)*<br><br>ດຳລັດສະບັບນີ້ມີເນື້ອໃນທີ່ເປັນ ການກຳນົດນິຕິກຳ ທີ່ມີພື້ນຖານມາຈາກຈຸດປະສົງທີ່ຢາກຈະສົ່ງເສີມການຄ້າທາງເອເລັກໂຕຣນິກ ກໍຄືກັນທັນເປັນທັນສະໄໝດ້ານການຄ້າ ເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມໃນໂລກຍຸກໂລກາພິວັດ ແລະ ເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ. ດຳລັດສະບັບນີ້ ຈະສ້າງໃຫ້ມີຄວາມຊັດເຈນ ແລະ ຄວາມເປັນເອກະພາບດ້ານຂອບວຽກງານ ແລະ ກົນໄກການຄຸ້ມຄອງວຽກງານການຄ້າທາງເອເລັກໂຕຣນິກ ສາມາດຮັບປະກັນໄດ້ຊຶ່ງການມີສ່ວນຮ່ວມ ແລະ ຄວາມເປັນເອກະພາບຂອງທຸກພາກສ່ວນໃນການກຳນົດນະໂຍບາຍໃນຂົງເຂດນີ້ ແລະ ນຳໃຊ້ຫງົບປະມານຂອງລັດທີ່ມີຢູ່ຢ່າງຈຳກັດ ໃຫ້ເກີດຜົນສູງສຸດ.<br>ນອກຈາກນັ້ນ, ເພື່ອຈັດຕັ້ງປະຕິບັດກຳລັດວ່າດ້ວຍການຄ້າທາງເອເລັກໂຕຣນິກ, ກະຊວງອຸດສາຫະກຳ ແລະ ການຄ້າໃນນາມເຈົ້າການຈັດຕັ້ງປະຕິບັດ ຕ້ອງໄດ້ກຳນົດກົນໄກປະສານງານ ເພື່ອຄຸ້ມຄອງວຽກງານຕ່າງໆ ທີ່ກຳນົດໃນດຳລັດ ເຖິງແມ້ນວ່າ ໜ່ວຍງານຈັດຕັ້ງປະຕິບັດຈະບັດຕົວຈິງຈະແມ່ນບັນດາກົມທີ່ມີຢູ່ແລ້ວກໍຕາມ ເວົ້າລວມກໍແມ່ນເນື່ອງຈາກວຽກງານຕິດພັນກັບຫຼາຍຂົງເຂດ ເປັນຕົ້ນແມ່ນຕິດພັນກັບຂົງເຂດເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ແລະ ທະນາຄານ ຊຶ່ງຈຳເປັນຕ້ອງໄດ້ມີກົນໄກປະສານງານໃໝ່ ເພື່ອຮັບຜິດຊອບຈັດຕັ້ງປະຕິບັດວຽກງານຄຸ້ມຄອງການຄ້າທາງເອເລັກໂຕຣນິກ, ເວົ້າສະເພາະກໍແມ່ນວຽກງານການຄ້າທາງເອເລັກໂຕຣນິກເປັນວຽກງານໃໝ່ ຊຶ່ງມີຄວາມຈຳເປັນທີ່ຈະຕ້ອງມີຄ່າໃຊ້ຈ່າຍ ໃນການຍົກລະດັບໜ້າວຽກ ແລະ ຄວາມອາດສາມາດໃນການຄຸ້ມຄອງ ໃຫ້ໄປຄຽງຄູ່ກັບການພັດທະນາໃນຍຸກສະໄໝໃໝ່. |

**5. ການຄົ້ນຄວ້າ**

| **5.1 ທາງເລືອກທີ່ຈະຕ້ອງໄດ້ພິຈາລະນາ**<br>**(ຂໍ້ແນະນໍາ-ກໍານົດຢ່າງໜ້ອຍ 3 ທາງເລືອກ /ວິທີແກ້ໄຂທີ່ ຈະຕ້ອງໄດ້ພິຈາລະນາ ລວມທັງ ທາງເລືອກ/ວິທີແກ້ໄຂທີ່ບໍ່ ແມ່ນນິຕິກໍາ)** | 5.2 **ການເລືອກເອົາວິທີການສ້າງ ຫຼື ປັບປຸງນິຕິກໍາ**<br>(ຂໍ້ແນະນໍາ - ອະທິບາຍຜົນສະທ້ອນທີ່ເປັນ ໄປໄດ້ຂອງແຕ່ລະທາງເລືອກ/ວິທີແກ້ໄຂ) |
|---|---|
| ກ. ກໍານົດເປັນນິຕິກໍາຂັ້ນກົດໝາຍຂຶ້ນມາໃໝ່ ເພື່ອແກ້ບັນຫາ ສະພາບການຂອງຂະແໜງການທີ່ເປັນຢູ່ *[ເນື່ອງຈາກການຄ້າທາງເອເລັກໂຕຣນິກ ເປັນຂົງເຂດທີ່ເກີດຂຶ້ນໃໝ່ ແລະ ມີຫຼາຍກົດໝາຍເປັນຫຼັກຢູ່ແລ້ວ, ທາງຄະນະຄົ້ນຄວ້າ ເລີຍບໍ່ເລືອກເອົາວິທີແກ້ໄຂນີ້].*<br>ຂ. ຜັນຂະຫຍາຍນິຕິກໍາທີ່ມີຢູ່ເປັນຕົ້ນແມ່ນກົດໝາຍວ່າດ້ວຍການປົກປ້ອງຜູ້ຊົມໃຊ້ ແລະ ກົດໝາຍວ່າດ້ວຍທຸລະກໍາທາງເອເລັກໂຕຣນິກ ເປັນນິຕິກໍາຂັ້ນກະຊວງ. *[ເນື່ອງຈາກການຄ້າທາງເອເລັກໂຕຣນິກ ເປັນຂົງເຂດທີ່ເກີດຂຶ້ນໃໝ່ ແລະ ຕິດພັນກັບຫຼາຍກະຊວງ ຊຶ່ງຈໍາເປັນຕ້ອງໄດ້ມີກົນໄກເຮັດວຽກຂ້າມກະຊວງ, ວິທີການນີ້ເລີຍບໍ່ສາມາດແກ້ໄຂໄດ້].*<br>**ຄ. ກໍານົດເປັນນິຕິກໍາສະເພາະຂັ້ນດໍາລັດ** *[ວິທີການທີ່ຖືກເລືອກ].* | **ເຫດຜົນທີ່ເລືອກກໍານົດເປັນນິຕິກໍາຂັ້ນດໍາລັດ** ແມ່ນເນື່ອງຈາກ (1) ວຽກງານການຄ້າທາງເອເລັກໂຕຣນິກນັ້ນເປັນວຽກ ທີ່ຕິດພັນກັບຫຼາຍຂະແໜງການໃນກົງຈັກລັດຖະບານ, (2) ວຽກງານການຄ້າທາງເອເລັກໂຕຣນິກເປັນວຽກງານໃໝ່ ແລະ ມີການປັບຕົວໄວ ເນື່ອງຈາກເປັນຂະແໜງທີ່ຂະຫຍາຍໄປຄຽງຄູ່ກັບການຂະຫຍາຍຕົວຂອງເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານສະໄໝໃໝ່, (3) ນິຕິກໍາສະບັບນີ້ແມ່ນເປັນການຜັນຂະຫຍາຍ ກົດໝາຍວ່າດ້ວຍການປົກປ້ອງຜູ້ຊົມໃຊ້ ແລະ ກົດໝາຍວ່າດ້ວຍທຸລະກໍາທາງເອເລັກໂຕຣນິກ. |

**6. ການທາບທາມຄໍາເຫັນ**

| **6.1 ຜູ່ມີສ່ວນກ່ຽວຂ້ອງ ທີ່ຈະທາບທາມຄໍາເຫັນ (ຂໍ້ແນະນໍາ - ໃຫ້ກໍານົດຜູ່ທີ່ມີສ່ວນກ່ຽວຂ້ອງທີ່ຈະຖືກທາບ ທາມຄໍາເຫັນ ໃນໄລຍະຮ່າງນິຕິກໍາ)** | 6.2 **ຜົນການທາບທາບຄໍາເຫັນ** |
|---|---|
| ພາກສ່ວນທີ່ກ່ຽວຂ້ອງທັງພາກລັດ ແລະ ພາກສ່ວນອື່ນຕໍ່ໄປນີ້ຈະໄດ້ຮັບການທາບທາມຄໍາເຫັນໃສ່ຮ່າງກົດໝາຍ:<br>**ພາກລັດ:** ກະຊວງອຸດສາຫະກໍາ ແລະ ການຄ້າ, ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ, ທະນາຄານແຫ່ງ ສປປ ລາວ, ກະຊວງຍຸຕິທໍາ, ກະຊວງການເງິນ, ກະຊວງການຕ່າງປະເທດ, ກະຊວງສຶກສາ, ກະຊວງຖະແຫຼງຂ່າວ ແລະ ວັດທະນາທໍາ[ຂັ້ນສູນກາງ ແລະ ທ້ອງຖິ່ນ]; | ທັງພາກລັດ ແລະ ເອກະຊົນ ເຫັນດີເປັນເອກະພາບດ້ານເນື້ອໃນ ແລະ ຄວາມຈໍາເປັນດ້ານນະໂຍບາຍຂອງດໍາລັດສະບັບນີ້.<br>**(ຄັດຕິດບົດລາຍງານການທາບທາມຄໍາເຫັນທົ່ວປະເທດ)** |

| | |
|---|---|
| **ພາກເອກະຊົນ ແລະ ອົງການປະຊາສັງຄົມ:** ສະພາການຄ້າ ແລະ ສະມາຄົມທຸລະກິດການຄ້າຕ່າງໆ [ຂັ້ນສູນກາງ ແລະ ທ້ອງຖິ່ນ] | |

7. **ຄວາມສຳຄັນ**

**7.1 ທ່າອຽງທຸລະກິດທີ່ຈະຖືກກະທົບ**

- **ຂະແໜງອຸດສາຫະກຳທີ່ຖືກກະທົບ:** ທຸກຂະແໜງການ ເນື່ອງຈາກ ເປັນການກຳນົດມາດຕະການຕໍ່ອຸດສາຫະກຳຈຳໜ່າຍສິນຄ້າ ຊຶ່ງເປັນສ່ວນສຳຄັນໃນຂັ້ນຂອດສຸດທ້າຍຂອງຕ່ອງໂສ້ອຸປະທານຂອງທຸກໆອຸດສາຫະກຳ ເປັນຕົ້ນຕົ້ນແລ້ວແມ່ນ ອຸດສາຫະກຳທີ່ໃຫ້ຜົນຜະລິດແກ່ສິນຄ້າອຸປະໂພກ ຫຼື ບໍລິໂພກ ແລະ ການບໍລິການໃນຊີວິດປະຈຳວັນທົ່ວໄປ.
- **ຈຳນວນຂອງທຸລະກິດ**: 1 ຂະແໜງການບໍລິການຫຼັກ (ທຸລະກິດຈໍ່າໜ່າຍສິນຄ້າ).
- **ທຸລະກິດທີ່ໜ້າຈະໄດ້ຮັບຜົນກະທົບ:** ທຸລະກິດຈໍ່າໜ່າຍສິນຄ້າ (ການຄ້າຂາຍຍົກ - ຂາຍຍ່ອຍ, ໃຫ້ບໍລິການຕະຫຼາດ ທາງເອເລັກໂຕຣນິກ), ແລະ ການບໍລິການອື່ນໆ...

**7.2 ຜົນກະທົບດ້ານການແຂ່ງຂັນ**

ນິຕິກຳທີ່ສະເໜີສ້າງ ຈະຈຳກັດການແຂ່ງຂັນ ໃນ ສປປ ລາວ: ☐ ແມ່ນ ☑ ບໍ່ແມ່ນ

ຖ້າແມ່ນ, ກະລຸນາອະທິບາຍວ່າເປັນໄປໄດ້ແນວໃດ ແລະ ເປັນຫຍັງ:.......................................

**7.3 ພັນທະຕໍ່ສາກົນ**

ຮ່າງນິຕິກຳ ທີ່ຮຽກຮ້ອງໃຫ້ສອດຄ່ອງກັບພັນທະຕໍ່ສາກົນ ☑ແມ່ນ ☐ ບໍ່ແມ່ນ

ຖ້າແມ່ນ, ແມ່ນພັນທະອັນໃດ:

☐WTO ☑AEC ☐ FTA ☑ ATISA ສະບັບປັບປຸງ ☑ ແຜນການເຊື່ອມໂຍງເສດຖະກິດດິຈິຕ໋ອນຂອງອາຊຽນ ☐ ອື່ນໆ (ກຳນົດແຈ້ງ) ສອດຄ່ອງກັບພັນທະ WTO ແລະ ATIGA

ຖ້າແມ່ນ, ຮ່າງນິຕິກຳທີ່ສະເໜີສ້າງ ສອດຄ່ອງກັບພັນທະຕໍ່ສາກົນນັ້ນ: ☑ແມ່ນ ☐ ບໍ່ແມ່ນ

ຮ່າງດຳລັດສະບັບດັ່ງກ່າວແມ່ນສອດຄ່ອງກັບ ສັນຍາວ່າດ້ວຍການຄ້າທາງເອເລັກໂຕຣນິກອາຊຽນ (ASEAN Agreement on Ecommerce)

(ຂໍ້ແນະນຳ-ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບເງື່ອນໄຂຕໍ່ພັນທະສາກົນ ແມ່ນສອບຖາມເພີ່ມເຕີມນຳ ກົມ ນຄຕ)

7.4 **ລະດັບການວິເຄາະ ແລະ ການທາບທາມຄຳເຫັນທີ່ຈຳເປັນ (ໃນໄລຍະຮ່າງນິຕິກຳ)**

| ຕົວຊີ້ວັດຄວາມສຳຄັນ | ໜ້ອຍ | ຫຼາຍ |
|---|---|---|
| ຈຳນວນຂອງຂະແໜງອຸດສາຫະກຳ ທີ່ຖືກຜົນກະທົບ<br>(ຂໍ້ແນະນຳ - ຫຼາຍ ໝາຍເຖິງມີຂະແໜງການສ່ວນໃຫຍ່/ທັງໝົດທີ່ຖືກກະທົບ) | ☐ | ☑ |
| ຈຳນວນທຸລະກິດທັງໝົດທີ່ຖືກກະທົບ<br>(ຂໍ້ແນະນຳ - ຫຼາຍ ໝາຍເຖິງ ຫຼາຍກວ່າ 30% ຂອງທຸລະກິດໃນຂະແໜງໃດໜຶ່ງ ຫຼື 20% ຂອງທຸລະກິດລາວທີ່ຖືກກະທົບ) | ☐ | ☑ |
| ຜົນກະທົບດ້ານຄ່າສິ້ນເປືອງຕໍ່ແຕ່ລະທຸລະກິດ (ສະເລ່ຍ)<br>(ຂໍ້ແນະນຳ - ຫຼາຍ ແມ່ນໝາຍເຖິງ ຫຼາຍກວ່າ 800.000 ກີບ ຕໍ່ທຸລະກິດໜຶ່ງ) | ☑ | ☐ |

| | | |
|---|---|---|
| ລະດັບການປ່ຽນແປງທຽບກັບວິທີການເຮັດທຸລະກິດທີ່ມີຢູ່ແລ້ວ<br>(ຂໍ້ແນະນຳ- ຂໍ້ແນະນຳ - ຫຼາຍ ໝາຍເຖິງການປ່ຽນແປງຢ່າງຫຼວງຫຼາຍຕໍ່ການ ດຳເນີນທຸລະກິດ) | ☑ | ☐ |
| ການບໍ່ເຫັນດີເປັນເອກະພາບກ່ຽວກັບຮ່າງນິຕິກຳທີ່ສະເໜີສ້າງ ໂດຍພາກສ່ວນທີ່ກ່ຽວຂ້ອງທີ່ຖືກກະທົບ<br>(ຂໍ້ແນະນຳ-ຫຼາຍ ໝາຍຄວາມວ່າ ມີຄວາມເຫັນດີເປັນເອກະພາບລະຫວ່າງພາກ ສ່ວນທີ່ກ່ຽວຂ້ອງໜ້ອຍໜຶ່ງ/ບໍ່ມີເລີຍ) | ☑ | ☐ |
| ໂດຍທົ່ວໄປແລ້ວ, ຖ້າວ່າໜຶ່ງໃນຕົວຊີ້ວັດ ຫາກມີຄວາມສຳຄັນ ກໍຖືວ່ານິຕິກຳທີ່ສະເໜີສ້າງ ມີຄວາມສຳຄັນ ຊຶ່ງຈະຕ້ອງພິຈາລະນາເຮັດການວິເຄາະແບບລົງເລິກ ແລະການທາບທາມຄຳເຫັນ ຢ່າງກວ້າງຂວາງກັບພາກສ່ວນ ທີ່ກ່ຽວຂ້ອງກັບນິຕິກຳນັ້ນ. | | |

**8. ການຊ່ວຍເຫຼືອໃນການປະຕິບັດຕາມລະບຽບກົດໝາຍ ແລະ ການທົບທວນຄືນ**

**8.1 ການຊ່ວຍເຫຼືອໃນການປະຕິບັດຕາມລະບຽບກົດໝາຍໃຫ້ສອດຄ່ອງ**

**(ຂໍ້ແນະນຳ - ກຳນົດອັນໃດແດ່)**

ລັດຖະບານ ຈະສາມາດຊ່ວຍເຫຼືອທຸລະກິດໄດ້ ໂດຍສະເພາະຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະກາງ ໃຫ້ປະຕິບັດຕາມລະບຽບກົດໝາຍທີ່ສອດຄ່ອງຕາມທີ່ໄດ້ກຳນົດໄວ້ໃນຮ່າງນິຕິກຳທີ່ສະເໜີ, ຖ້າຫາກລັດຖະບານ ນຳໃຊ້ກົດ ໝາຍໃໝ່ທີ່ໄດ້ນຳສະເໜີນັ້ນ ກະຊວງອຸດສາຫະກຳ ແລະ ການຄ້າ ຈະຕ້ອງໄດ້ປະສານສົມທົບກັບສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ລວມທັງບັນດາສະມາຄົມທຸລະກິດ ທີ່ກ່ຽວຂ້ອງ ໃນການເຜີຍແຜ່ຜົນປະໂຫຍດ ແລະ ການປະຕິບັດຕາມຂໍ້ກຳນົດດັ່ງກ່າວ. ພ້ອມນັ້ນ, ກໍຈະຕ້ອງໄດ້ມີການພິມເຜີຍແຜ່ຕໍ່ສາທາລະນະຊົນ ເພື່ອຮັບຊາບ ແລະ ເຂົ້າໃຈຕໍ່ຜົນກະທົບ ແລະ ຄວາມຈຳເປັນໃນການນຳໃຊ້ມາດຕະການດັ່ງກ່າວ.

**8.2 ການທົບທວນຄືນ ຫຼັງຈາກການຈັດຕັ້ງປະຕິບັດ**

(ຂໍ້ແນະນຳ - ກຳນົດເວລາໃດທີ່ຄວນຈະເຮັດການທົບທວນຄືນນິຕິກຳ ຫຼັງຈາກການຈັດຕັ້ງປະຕິບັດ, ຜູ່ໃດເປັນຜູ່ເຮັດ ແລະ ກຳນົດຈຸດປະສົງ ໂດຍສະເພາະ ຂົງເຂດການທົບທວນຄືນ)

ອາດຈະມີການທົບທວນຄືນ 1 ປີ ຫຼັງຈາກມີການຈັດຕັ້ງປະຕິບັດ

9. **ການຕົກລົງເຫັນດີ**

**<u>ຮ່າງບົດປະເມີນຜົນສະບັບສຸດທ້າຍ (ຂັ້ນສຸດທ້າຍ)</u>**

| # | | ແມ່ນ/ບໍ່ແມ່ນ |
|---|---|---|
| 1. | ໄດ້ມີການປະເມີນຄືນຜົນກະທົບທັງໝົດ (ລວມມີຜົນກະທົບດ້ານເສດຖະກິດ, ການແຂ່ງ ຂັນ, ສິນທິສັນຍາສາກົນ, ສັງຄົມ ແລະ ສະພາບແວດລ້ອມ? ) | ແມ່ນ |
| 2. | ໄດ້ມີການພິຈາລະນາຄ່າສິ້ນເປືອງໃນການປະຕິບັດຕາມລະບຽບກົດໝາຍຂອງພາກທຸລະກິດ ລວມທັງຄ່າໃຊ້ຈ່າຍສຳລັບເວລາ, ພະນັກງານ, ການຝຶກອົບຮົມ, ການແນະນຳຂອງຊ່ຽວຊານ ແລະ ອຸປະກອນ ຫຼືບໍ່? | ຍັງ |
| 3. | ໄດ້ມີການທາບທາມຄຳເຫັນຈາກພາກສ່ວນທີ່ກ່ຽວຂ້ອງ (ທຸລະກິດ, ລັດຖະບານ, ຊຸມຊົນໃນ ສັງ-ຄົມ) ຫຼືບໍ່ ກ່ຽວກັບທາງເລືອກ/ວິທີແກ້ໄຂ ລວມທັງຄວາມຈຳເປັນ ໃນການສະເໜີຮ່າງນິຕິ ກຳ? | ແມ່ນ |
| 4. | ຮ່າງນິຕິກຳ ມີຄວາມສອດຄ່ອງກັບນິຕິກຳທີ່ກ່ຽວຂ້ອງອື່ນ ໃນລະດັບດຽວກັນ ຫຼື ສູງກວ່າ ບໍ່ ລວມທັງພັນທະຕໍ່ສາກົນ? | ແມ່ນ |
| 5. | ໄດ້ເຮັດບົດປະເມີນຜົນກະທົບດ້ານການເງິນ ຕາມເອກະສານຊ້ອນທ້າຍ ບໍ່? | ຍັງ |

<table>
<tr><td>6.</td><td>ເມື່ອພົບວ່າ ຜົນກະທົບ ມີຄວາມສຳຄັນ, ໄດ້ມີການວິເຄາະຜົນກະທົບແບບລົງເລິກ ແລະໄດ້ ທາບທາມຄຳເຫັນກັບພາກສ່ວນທີ່ກ່ຽວຂ້ອງຢ່າງກວ້າງຂວາງ ແລະໄດ້ຄັດຕິດເປັນເອກະສານຊ້ອນທ້າຍ ບໍ່?</td><td>ແມ່ນ</td></tr>
<tr><td colspan="3">ຖ້າຕອບວ່າ "ບໍ່", ກະລຸນາອະທິບາຍ: ຈະໄດ້ມີການຜັນຂະຫຍາຍດຳລັດເປັນນິຕິກຳຂັ້ນກະຊວງ ຊຶ່ງລາຍລະອຽດດ້ານພາລະດ້ານການເງິນ ບໍ່ວ່າຈະເປັນຕໍ່ລັດເອງ ຫຼື ຕໍ່ພາກທຸລະກິດ ຈະຂຶ້ນຢູ່ກຳລາຍລະອຽດຂອງນິຕິກຳຍ່ອຍ.</td></tr>
</table>

1. ☑ **ເຊັນບົດປະເມີນຜົນກະທົບ (ຂັ້ນສຸດທ້າຍ) ເພື່ອສົ່ງໄປຍັງກະຊວງຍຸຕິທຳ/ພະແນກຍຸຕິທຳ ໃຫ້ຄຳເຫັນ ຫຼື**
2. ☐ ເຊັນບົດປະເມີນຜົນກະທົບ (ຂັ້ນສຸດທ້າຍ) ພ້ອມດ້ວຍຄຳເຫັນຂອງກະຊວງຍຸຕິທຳ/ພະແນກຍຸຕິທຳ ກ່ອນພິມເຜີຍແຜ່

ໄຊຊະນະ ໄຊຍະກອນ

19 FEB 2020

| | |
|---|---|
| ........................................ | ................................ |
| ຫົວໜ້າຄະນະຮັບຜິດຊອບຮ່າງນິຕິກຳ | ວັນທີ |